## ວິທີການສະໝັກຂໍການຄຸ້ມຄອງ

**ອອນລາຍ**

ການສະໝັກຂໍຜ່ານອອນລາຍຈະສະແດງໃຫ້ທ່ານເຫັນໃນທັນທີວ່າທ່ານມີສິດສຳລັບການຄຸ້ມຄອງທີ່ບໍ່ເສຍຄ່າ ຫຼື ມີຕົ້ນທຶນຕ່ຳຜ່ານ Apple Health ຫຼື ບໍ່. **ທ່ານສາມາດສະໝັກຂໍໄດ້ຕະຫຼອດເວລາໃນປີ. ເລີ່ມຕົ້ນທີ່ wahealthplanfinder.org**

**ທ່ານຈຳເປັນຕ້ອງມີຂໍ້ມູນນີ້ກ່ອນທີ່ທ່ານຈະເລີ່ມຕົ້ນ:**

- ລາຍໄດ້ປະຈຳເດືອນສຳລັບຄົວເຮືອນຂອງທ່ານ.
- ຂໍ້ມູນຄົນເຂົ້າເມືອງຂອງທ່ານ ຖ້າຂໍ້ມູນນັ້ນໃຊ້ໄດ້ກັບທ່ານ.
- ວັນເດືອນປີເກີດສຳລັບສະມາຊິກແຕ່ລະຄົນໃນຄົວເຮືອນຂອງທ່ານ.
- ໝາຍເລກປະກັນສັງຄົມສຳລັບສະມາຊິກແຕ່ລະຄົນໃນຄົວເຮືອນທີ່ສະໝັກຂໍການຄຸ້ມຄອງ, ຖ້າໝາຍເລກດັ່ງກ່າວໃຊ້ໄດ້ກັບທ່ານ.

washington healthplanfinder
click. compare. covered.

**ວິທີການອື່ນໆໃນການສະໝັກຂໍ**

ໂທຫາ (ໂທຟຣີ) 1-855-923-4633
TTY/TTD 1-855-627-9604

**ຜູ້ຊ່ວຍເຫຼືອ/ຜູ້ແນະແນວສ່ວນບຸກຄົນ**

ໂທຫາໝາຍເລກໂທຟຣີຢູ່ຂ້າງເທິງເພື່ອຊອກຫາຜູ້ຊ່ວຍເຫຼືອສ່ວນບຸກຄົນ ຫຼື ໄປທີ່ **wahealthplanfinder.org** ແລະ ຄລິກໃສ່ລິ້ງ ຂໍການຊ່ວຍເຫຼືອ.

**ໄປສະນີ**

ດາວໂຫຼດແບບສະໝັກທີ່ **hca.wa.gov/health-care-application** ແລະ ປະຕິບັດຕາມຄຳສັ່ງໃນການສົ່ງໄປສະນີ.

## ຕ້ອງການຄວາມຊ່ວຍເຫຼືອໃນການສະໝັກຂໍບໍ?

**ຜູ້ຊ່ຽວຊານການລົງທະບຽນທີ່ຢູ່ໃນຊຸມຊົນ**

ຜູ້ຊ່ຽວຊານເຫຼົ່ານີ້ຈາກອົງການດູແລສຸຂະພາບແມ່ນຢູ່ໃນໂຮງໝໍ, ຄລີນິກ, ກົມສຸຂະພາບ ແລະ ສູນບໍລິການພາຍນອກຂອງຊຸມຊົນທີ່ຢູ່ທົ່ວລັດ. ເບິ່ງລາຍຊື່ທີ່: **hca.wa.gov/hcacommunitystaff**

**ຜູ້ຊ່ວຍເຫຼືອ ຫຼື ຜູ້ແນະແນວສ່ວນບຸກຄົນ**

ໂດຍໄດ້ຮັບການຝຶກອົບຮົມເພື່ອໃຊ້ Washington Healthplanfinder, ຜູ້ຊ່ວຍເຫຼືອ/ຜູ້ແນະແນວເຫຼົ່ານີ້ແມ່ນຢູ່ໃນຫຼາຍຊຸມຊົນ. ຊອກຫາພວກເຂົາໂດຍໂທຫາ 1-855-923-4633. ສຳລັບຜູ້ໃຊ້ TTY/TDD, ກະລຸນາໂທຫາ 1-855-627-9604.

**ຜູ້ຮ່ວມມືໃນຊຸມຊົນ**

ພະນັກງານ ຫຼື ຜູ້ອາສາສະໝັກໃນອົງການທີ່ຕັ້ງໃນຊຸມຊົນທ້ອງຖິ່ນ ນັ້ນກໍຄື ສູນສຸຂະພາບ, ໂຮງໝໍ ແລະ ອົງການທີ່ບໍ່ສະແຫວງຜົນກຳໄລ ແມ່ນສາມາດຊ່ວຍໃຫ້ທ່ານສະໝັກຂໍໄດ້.

**ກົມສຸຂະພາບປະຈຳເຂດປົກຄອງຂອງທ່ານ**

ໂທເພື່ອກວດເບິ່ງວ່າມີຫຍັງໃຫ້ບໍລິການໃນພື້ນທີ່ຂອງທ່ານ.

**ຜູ້ອາສາສະໝັກ SHIBA**

ຜູ້ອາສາສະໝັກຜ່ານ SHIBA (ຜູ້ໃຫ້ຄຳປຶກສາກ່ຽວກັບສິດທິປະໂຫຍດປະກັນສຸຂະພາບທົ່ວລັດ) ຈະໃຫ້ການຊ່ວຍເຫຼືອທີ່ບໍ່ເສຍຄ່າ, ກົງໄປກົງມາ ແລະ ເປັນຄວາມລັບໃຫ້ແກ່ທ່ານສຳລັບຕົວເລືອກການດູແລສຸຂະພາບ. ໂທຫາ 1-800-562-6900.

Washington State Health Care Authority

HCA ປະຕິບັດຕາມກົດໝາຍສິດທິພົນລະເມືອງທັງໝົດທີ່ມີຜົນບັງຄັບໃຊ້ຂອງລັດຖະບານກາງ ແລະ ຂອງລັດວໍຊິງຕັນ ແລະ ມຸ່ງໝັ້ນທີ່ຈະໃຫ້ການເຂົ້າເຖິງການບໍລິການຂອງພວກເຮົາຢ່າງເທົ່າທຽມກັນ. ຖ້າທ່ານຕ້ອງການການອຳນວຍຄວາມສະດວກ ຫຼື ຮ້ອງຂໍເອກະສານໃນຮູບແບບ ຫຼື ພາສາອື່ນໆ, ກະລຸນາໂທຫາ 1-800-562-3022 (TRS: 711).

Washington Apple Health

# ມັນບໍ່ເຄີຍເປັນເລື່ອງງ່າຍທີ່ຈະຊອກຫາການຄຸ້ມຄອງສຸຂະພາບທີ່ບໍ່ເສຍຄ່າ ຫຼື ທີ່ມີຕົ້ນທຶນຕ່ຳ



HCA 19-003 LA (3/24) Laotian

# ທ່ານມີສິດບໍ?

## Apple Health ສຳລັບຜູ້ໃຫຍ່

**ທ່ານອາດມີສິດຖ້າ:**

- ທ່ານອາຍຸລະຫວ່າງ 19 ແລະ 65 ປີ.
- ທ່ານເປັນຜູ້ຢູ່ອາໄສໃນລັດວໍຊິງຕັນ.
- ທ່ານເປັນພົນລະເມືອງສະຫະລັດ ຫຼື ເຂົ້າເກນເງື່ອນໄຂຄົນເຂົ້າເມືອງຂອງ Medicaid.
- ລາຍໄດ້ຄົວເຮືອນປະຈຳປີຂອງທ່ານຢູ່ທີ່ ຫຼື ຕ່ຳກວ່າຈຳນວນທີ່ສະແດງຢູ່ຕາຕະລາງເງື່ອນໄຂສິດຕາມລາຍໄດ້ທີ່ຢູ່ເບື້ອງຂວາ.

## Apple Health ສຳລັບບຸກຄົນຖືພາ

ໂຄງການນີ້ໃຫ້ການຄຸ້ມຄອງແກ່ບຸກຄົນຖືພາທີ່ມີລາຍໄດ້ທີ່ສາມາດນັບໄດ້ຢູ່ທີ່ ຫຼື ຕ່ຳກວ່າ 198 ເປີເຊັນຂອງລະດັບຄວາມທຸກຍາກທີ່ກຳນົດໂດຍລັດຖະບານກາງ ໂດຍບໍ່ໄດ້ພິຈາລະນາເຖິງສະຖານະພົນລະເມືອງ ຫຼື ການເຂົ້າເມືອງ. ການຄຸ້ມຄອງຫຼັງການຖືພາ (APC) ຈະໃຫ້ການຄຸ້ມຄອງຫຼັງຈາກທີ່ການຖືພາຂອງທ່ານສິ້ນສຸດລົງ. ເບິ່ງຕາຕະລາງເງື່ອນໄຂສິດຕາມລາຍໄດ້ທີ່ຢູ່ເບື້ອງຂວາ.

## Apple Health ສຳລັບເດັກນ້ອຍ

ການຄຸ້ມຄອງແມ່ນຈະບໍ່ເສຍຄ່າສຳລັບເດັກນ້ອຍໃນຄົວເຮືອນທີ່ມີລາຍໄດ້ຢູ່ທີ່ ຫຼື ຕ່ຳກວ່າ 215 ເປີເຊັນຂອງລະດັບຄວາມທຸກຍາກທີ່ກຳນົດໂດຍລັດຖະບານກາງ ແລະ ມີໃຫ້ເບ້ຍປະກັນປະຈຳເດືອນທີ່ຕ່ຳສຳລັບເດັກນ້ອຍໃນຄົວເຮືອນທີ່ມີລາຍໄດ້ຢູ່ທີ່ ຫຼື ຕ່ຳກວ່າ 317 ເປີເຊັນຂອງລະດັບຄວາມທຸກຍາກທີ່ກຳນົດໂດຍລັດຖະບານກາງ. ເບິ່ງຕາຕະລາງເງື່ອນໄຂສິດຕາມລາຍໄດ້ທີ່ຢູ່ເບື້ອງຂວາ.



# ການແຈ້ງເຕືອນທີ່ສຳຄັນ

ເບິ່ງວ່າທ່ານມີສິດສຳລັບ Washington Apple Health (Medicaid) ຫຼື ບໍ່ ທີ່ **hca.wa.gov/apple-health-eligibility**, ທ່ານສາມາດລົງທະບຽນໄດ້ຕະຫຼອດເວລາໃນປີທີ່ **wahealthplanfinder.org**.

ຖ້າທ່ານບໍ່ມີສິດສຳລັບ Apple Health, ທ່ານອາດເຂົ້າເກນເງື່ອນໄຂສຳລັບການຊ່ວຍເຫຼືອໃນເລື່ອງການປະກັນສຸຂະພາບຂອງທ່ານ ຫຼື ການບໍລິການສຸຂະພາບອື່ນໆ.

## ຕາຕະລາງເງື່ອນໄຂສິດຕາມລາຍໄດ້ສຳລັບສົກປີ 2024, Washington Apple Health (Medicaid)

| *ທ່ານອາດເຂົ້າເກນເງື່ອນໄຂສຳລັບ ...* | ໜຶ່ງຄົນ | ຄົວເຮືອນທີ່ມີ 2 ຄົນ | ຄົວເຮືອນທີ່ມີ 3 ຄົນ | ຄົວເຮືອນທີ່ມີ 4 ຄົນ | ຄົວເຮືອນທີ່ມີ 5 ຄົນ | ຄົວເຮືອນທີ່ມີ 6 ຄົນ | ຄົວເຮືອນທີ່ມີ 7 ຄົນ | ຄົວເຮືອນທີ່ມີ 8 ຄົນ |
|---|---|---|---|---|---|---|---|---|
| **Apple Health ສຳລັບຜູ້ໃຫຍ່** (ຜູ້ໃຫຍ່ທີ່ມີອາຍຸ 19 ຈົນຮອດອາຍຸ 65) | **$1,732** ຕໍ່ເດືອນ<br>$20,784 ຕໍ່ປີ | **$2,351** ຕໍ່ເດືອນ<br>$28,212 ຕໍ່ປີ | **$2,969** ຕໍ່ເດືອນ<br>$35,628 ຕໍ່ປີ | **$3,588** ຕໍ່ເດືອນ<br>$43,056 ຕໍ່ປີ | **$4,207** ຕໍ່ເດືອນ<br>$50,484 ຕໍ່ປີ | **$4,825** ຕໍ່ເດືອນ<br>$57,900 ຕໍ່ປີ | **$5,444** ຕໍ່ເດືອນ<br>$65,328 ຕໍ່ປີ | **$6,063** ຕໍ່ເດືອນ<br>$72,756 ຕໍ່ປີ |
| **Apple Health ສຳລັບບຸກຄົນແລະພາ APC** | **$2,485** ຕໍ່ເດືອນ<br>$29,820 ຕໍ່ປີ | **$3,373** ຕໍ່ເດືອນ<br>$40,476 ຕໍ່ປີ | **$4,260** ຕໍ່ເດືອນ<br>$51,120 ຕໍ່ປີ | **$5,148** ຕໍ່ເດືອນ<br>$61,776 ຕໍ່ປີ | **$6,036** ຕໍ່ເດືອນ<br>$72,432 ຕໍ່ປີ | **$7,811** ຕໍ່ເດືອນ<br>$93,732 ຕໍ່ປີ | **$7,811** ຕໍ່ເດືອນ<br>$93,732 ຕໍ່ປີ | **$8,699** ຕໍ່ເດືອນ<br>$104,388 ຕໍ່ປີ |
| **Apple Health ສຳລັບເດັກນ້ອຍ** (ບໍ່ເສຍຄ່າສຳລັບເດັກນ້ອຍຈົນເຖິງອາຍຸ 19) | **$2,698** ຕໍ່ເດືອນ<br>$32,376 ຕໍ່ປີ | **$3,662** ຕໍ່ເດືອນ<br>$43,944 ຕໍ່ປີ | **$4,626** ຕໍ່ເດືອນ<br>$55,512 ຕໍ່ປີ | **$5,590** ຕໍ່ເດືອນ<br>$67,080 ຕໍ່ປີ | **$6,554** ຕໍ່ເດືອນ<br>$78,648 ຕໍ່ປີ | **$7,518** ຕໍ່ເດືອນ<br>$90,216 ຕໍ່ປີ | **$8,482** ຕໍ່ເດືອນ<br>$101,784 ຕໍ່ປີ | **$9,446** ຕໍ່ເດືອນ<br>$113,352 ຕໍ່ປີ |
| **Apple Health ສຳລັບເດັກນ້ອຍ** *ພ້ອມກັບເບ້ຍປະກັນ* (ເບ້ຍປະກັນປະຈຳເດືອນ $20 ຕໍ່ເດັກນ້ອຍໜຶ່ງຄົນ; ສູງສຸດຕໍ່ຄອບຄົວ $40) | **$3,326** ຕໍ່ເດືອນ<br>$39,912 ຕໍ່ປີ | **$4,514** ຕໍ່ເດືອນ<br>$54,168 ຕໍ່ປີ | **$5,702** ຕໍ່ເດືອນ<br>$68,424 ຕໍ່ປີ | **$6,890** ຕໍ່ເດືອນ<br>$82,680 ຕໍ່ປີ | **$8,078** ຕໍ່ເດືອນ<br>$96,936 ຕໍ່ປີ | **$9,266** ຕໍ່ເດືອນ<br>$111,192 ຕໍ່ປີ | **$10,454** ຕໍ່ເດືອນ<br>$125,448 ຕໍ່ປີ | **$11,642** ຕໍ່ເດືອນ<br>$139,704 ຕໍ່ປີ |
| **Apple Health** ສຳລັບເດັກນ້ອຍ *ພ້ອມກັບເບ້ຍປະກັນ* (ເບ້ຍປະກັນປະຈຳເດືອນ $30 ຕໍ່ເດັກນ້ອຍໜຶ່ງຄົນ; ສູງສຸດຕໍ່ຄອບຄົວ $60) | **$3,978** ຕໍ່ເດືອນ<br>$47,736 ຕໍ່ປີ | **$5,400** ຕໍ່ເດືອນ<br>$64,800 ຕໍ່ປີ | **$6,821** ຕໍ່ເດືອນ<br>$81,852 ຕໍ່ປີ | **$8,242** ຕໍ່ເດືອນ<br>$98,904 ຕໍ່ປີ | **$9,663** ຕໍ່ເດືອນ<br>$115,956 ຕໍ່ປີ | **$11,084** ຕໍ່ເດືອນ<br>$133,008 ຕໍ່ປີ | **$12,506** ຕໍ່ເດືອນ<br>$150,072 ຕໍ່ປີ | **$13,927** ຕໍ່ເດືອນ<br>$167,124 ຕໍ່ປີ |

ສຳລັບແຕ່ລະຄົນທີ່ເພີ່ມເຂົ້າມາ, ໃຫ້ເພີ່ມໃສ່ລາຍໄດ້ປະຈຳເດືອນ:

ຜູ້ໃຫຍ່ .......... $619

ບຸກຄົນຖືພາ .......... $888

Apple Health ສຳລັບເດັກນ້ອຍ .......... $964

Apple Health ສຳລັບເດັກນ້ອຍພ້ອມກັບເບ້ຍປະກັນ $20 .......... $1,188

Apple Health ສຳລັບເດັກນ້ອຍພ້ອມກັບເບ້ຍປະກັນ $30 .......... $1,421

*ຈຳນວນລາຍໄດ້ທີ່ມີຜົນນຳໃຊ້ໃນວັນທີ 1 ເມສາ 2024 ຈົນເຖິງວັນທີ 31 ມີນາ 2025.*